


# ທະນາຄານແຫ່ງ ສປປ ລາວ ຈັດກອງປະຊຸມຝຶກອົບຮົມ ແລະ ເຜີຍແຜ່ນິຕິກຳທີ່ສຳຄັນອອກໃໝ່ ຕິດພັນກັບການປະຕິບັດມາດຕະການຕໍ່ທະນາຄານທຸລະກິດຢູ່ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ




ກອງປະຊຸມຝຶກອົບຮົມ ແລະ ເຜີຍແຜ່ນິຕິກຳທີ່ສຳຄັນອອກໃໝ່ ຕິດພັນກັບການປະຕິບັດມາດຕະການຕໍ່ທະນາຄານທຸລະກິດ, ເຊິ່ງກອງປະຊຸມໄດ້ດຳເນີນໄປເປັນເວລາ 2 ວັນ ກໍ່ຄື ວັນທີ 27 ຫາ 28 ກໍລະກົດ 2022 ເລີ່ມແຕ່ ເວລາ 8:00 ໂມງ ຫາ 16:30 ໂມງ, ໂດຍການເປັນປະທານກອງປະຊຸມຂອງ ທ່ານ ອາລຸນ ບຸນຍົງ ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ແລະ ທ່ານ ນາງ ພຸດດາວັນ ສີຣິສີມບັດ ຮອງຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ເປັນຄະນະປະທານຮ່ວມ, ໂດຍມີພາກສ່ວນເຂົ້າຮ່ວມກອງປະຊຸມດັ່ງນີ້: ບັນດາທ່ານຫົວໜ້າພະແນກ, ຄະນະພະແນກ ແລະ ພະນັກງານວິຊາການ ຈາກບັນດາພະແນກການພາຍໃນແຂວງຫຼວງພະບາງ, ຄະນະສາຂາ, ຄະນະພະແນກ ແລະ ວິຊາການ ຂອງ ທທລ ຫຼບ, ທທລ ອຊ, ທທລ ຊຂ, ຫົວໜ້າສາຂາ, ຄະນະສາຂາທະນາຄານທຸລະກິດ, ຜູ້ອຳນວຍການ, ຄະນະ

ອຳນວຍການ ຂອງສະຖາບັນການເງິນ ພາຍໃນແຂວງຫຼວງພະບາງ ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້, ກອງປະຊຸມຝຶກອົບຮົມ ແມ່ນເພື່ອເຜີຍແຜ່ນິຕິກຳທີ່ສຳຄັນອອກໃໝ່ ຕິດພັນກັບການນຳໃຊ້ມາດຕະການຕໍ່ທະນາຄານທຸລະກິດ ຄື: 1). ຂໍ້ຕົກລົງວ່າດ້ວຍມາດຕະການແຕ່ຫົວທີຕໍ່ສະຖາບັນການເງິນ ສະບັບເລກທີ 374/ທຫລ, ລົງວັນທີ 16 ພຶດສະພາ 2022; 2). ຂໍ້ຕົກລົງວ່າດ້ວຍການແກ້ໄຂສະຖາບັນການເງິນທີ່ຢູ່ໃນພາວະວິກິດ ສະບັບເລກທີ 402/ທຫລ, ລົງວັນທີ 31 ພຶດສະພາ 2022; 3). ຂໍ້ຕົກລົງວ່າດ້ວຍການນຳໃຊ້ມາດຕະການຕໍ່ການລະເມີດຂອງທະນາຄານທຸລະກິດ ສະບັບເລກທີ 400/ທຫລ, ລົງວັນທີ 30 ພຶດສະພາ 2022; 4). ຂໍ້ຕົກລົງວ່າດ້ວຍຂອບເຂດການສະໜອງສິນເຊື່ອຂອງທະນາຄານທຸລະກິດ ສະບັບເລກທີ 296/ທຫລ, ລົງວັນທີ 17 ມິຖຸນາ 2021, ໃຫ້ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ຮັບຮູ້ ແລະ ເຂົ້າໃຈ ພ້ອມທັງປະຕິບັດຕາມເນື້ອໃນຂອງບັນດາຂໍ້ຕົກລົງທັງ 4 ສະບັບນີ້ຢ່າງຖືກຕ້ອງ ເພື່ອເປັນການພັດທະນາວຽກງານຄຸ້ມຄອງທະນາຄານທຸລະກິດ ຢູ່ ສປປ ລາວ ທີ່ຕິດພັນກັບການພັດທະນາເສດຖະກິດຂອງຊາດ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ທຽບເທົ່າກັບສາກົນເທື່ອລະກ້າວ, ກອງປະຊຸມຝຶກອົບຮົມ ແລະ ເຜີຍແຜ່ນິຕິກຳທີ່ສຳຄັນອອກໃໝ່ ຕິດພັນກັບການປະຕິບັດມາດຕະການຕໍ່ທະນາຄານທຸລະກິດໃນຄັ້ງນີ້ ແມ່ນມີຄວາມໝາຍຄວາມສຳຄັນຫຼາຍ ກອງປະຊຸມແມ່ນມີບັນຍາກາດທີ່ດີ ແລະ ມີການແລກປ່ຽນຄຳຄິດຄຳເຫັນເຊິ່ງກັນ ແລະ ກັນຢ່າງຟົດຟື້ນດີພໍສົມຄວນ ແລະ ກໍ່ເຮັດໃຫ້ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ຮັບຮູ້ເຖິງວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ວຽກງານຄຸ້ມຄອງສະຖາບັນການເງິນ ແລະ ຮູ້ເຖິງຄວາມສຳຄັນຂອງວຽກງານດັ່ງກ່າວ ພ້ອມທັງຮັບຮູ້ ແລະ ເຂົ້າໃຈນິຕິກຳທີ່ສຳຄັນກໍຄື ບັນດາຂໍ້ຕົກລົງອອກໃໝ່ທັງ 4 ສະບັບ.

**ຂຽນຂ່າວ: ບົວວອນ ວົງສະຫວ່າງ**

**ຮູບພາບ: ສຸດທິສັກ ຫວັງສະຫວັດ**

